# ບົດທີ 16

# ການເງິນໃນຄູິດສະຕະຈັກ

ໃນບົດນີ້ເຮົາຈະສຶກສາເລື່ອງການບັນຊີໃນຄູິດສະຕະຈັກ.

| ໜ້າ 4 | | | | |
|---|---|---|---|---|
| ວັນເດືອນປີ | ຊື່ລາຍການ | ລາຍເຊັນ | ລາຍຮັບ | ລາຍຈ່າຍ |
| | ຕົ້ນທຶນ | | 4030 | |
| 20-2-90 | ຊັບຖວາຍ | | 1020 | |
| 21-2-90 | ຂາຍເຂົ້າສານ | | 3010 | |
| 22-2-90 | ຊື້ປຶ້ມເພງ | | | 500 |
| 24-2-90 | ຊ່ວຍຄົນທຸກຍາກ | | | 200 |
| 27-2-90 | ຊັບຖວາຍ | | 700 | |
| | ລວມ | | 8760 | 700 |

| ໜ້າ 5 | | | | |
|---|---|---|---|---|
| ວັນເດືອນປີ | ຊື່ລາຍການ | ລາຍເຊັນ | ລາຍຮັບ | ລາຍຈ່າຍ |
| | ຕົ້ນທຶນ | | 8060 | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| | ລວມ | | | |

| ໜ້າ 6 | | | | |
|---|---|---|---|---|
| ວັນເດືອນປີ | ຊື່ລາຍການ | ລາຍເຊັນ | ລາຍຮັບ | ລາຍຈ່າຍ |
| | ຕົ້ນທຶນ | | | |

**1** ກ. ພະເຢຊູໂຕ້ຖຽງກັນກັບພວກນັກທຳແລະພວກຟາລິຊາຍໃນວັນໃດ? _______________

ຂ. ໃນມື້ຕໍ່ໄປພະອົງກັບພວກສາວົກພັກຜ່ອນໃນບ້ານເບດທາເນຍ ຄືວັນໃດ? ___________

ຄ. ແຕ່ມີຜູ້ໜຶ່ງໃນພວກສາວົກທີ່ບໍ່ໄດ້ພັກຜ່ອນ ຄືຜູ້ໃດ? (ມທ 26:14) ________________

| |
|---|
| ແຕ່ວ່າກ່ອນທີ່ເຮົາຈະຮຽນເລື່ອງເຫດການໃນວັນພຸດນັ້ນ ມີອີກປະການໜຶ່ງທີ່ຈະຍົກພິຈາລະນາ. ໃຫ້ອ່ານ ມທ 26:6-13 |

**2** ມັດທາຍມັກແຕ່ຍົກເຫດການຕ່າງໆ ໄປລຽງຕາມເລື່ອງແທນທີ່ຈະລຽງຕາມລຳດັບ. ດັ່ງນັ້ນເພື່ອຈະຮູ້ລຳດັບໄດ້ໃຫ້ເຮົາອ່ານເລື່ອງນີ້ຈາກພະຄຳພີໂຢຮັນ.

ກ. ໃນໂຢຮັນ 12:1 ເຂົາຈັດງານລ້ຽງນັ້ນກ່ອນເທດສະການປັດສະຄາຈັກວັນ? _________

ຂ. ຕາມມັດທາຍ 26:1-5 ພວກປະໂລຫິດປະຊຸມກັນຈັກມື້ກ່ອນເທດສະການທີ່ຈະຈັບພະອົງ?

______________________________________________________________

ຄ. ດັ່ງນັ້ນອັນໃດຢູ່ກ່ອນ. (ເລືອກ)

______ ການລ້ຽງຢູ່ບ້ານເບດທາເນຍ

______ ການປະຊຸມລະຫວ່າງພວກປະໂລຫິດທີ່ຈະຈັບພະອົງ

**3** ທັງມັດທາຍກັບມາລະໂກລຽງເຫດການເຫຼົ່ານີ້ຕາມເລື່ອງເພື່ອຈະສະແດງສ່ວນແຕກຕ່າງກັນລະຫວ່າງທ່າທີຂອງມາລີອາແລະຢູດາອິດສະກາລີອົດ. ດັ່ງນັ້ນເຂົາບັນທຶກຕາມເລື່ອງແທນທີ່ຈະບັນທຶກຕາມລຳດັບເວລາ. ມັດທາຍແລະມາລະໂກບັນທຶກຢ່າງໃດ? (ເລືອກ)

ກ. ລຽງຕາມລຳດັບ ຂ. ຕາມເລື່ອງ ຄ. ຕາມໃຈ

**4** ເຂົາຈັດການລ້ຽງຢູ່ບ້ານເບດທາເນຍໃນວັນໃດ? _____________________________

*ຖ້າເຮົາອ່ານເລື່ອງນີ້ຈາກພະທຳໂຢຮັນ ເຮົາຈະຮູ້ອີກສອງປະການທີ່ມັດທາຍບໍ່ໄດ້ບັນທຶກຄື:*

** ບໍ່ແມ່ນແຕ່ນາງຖອກນ້ຳມັນໃສ່ພະສຽນເທົ່ານັ້ນເພິ່ນຖອກໃສ່ທັງພະບາດດ້ວຍ*

** ໂຢຮັນກໍບອກຊື່ຂອງນາງ*

**5** ກ. ນາງນັ້ນຊື່ຫຍັງ? (ຢຮ 12:3) ________________________________________

ຂ. ນາງນັ້ນມີເອື້ອຍແລະນ້ອງຊາຍຊື່ຫຍັງ? (ຢຮ 12:2) _________________________

**6** ມາລີອານັບຖືພະເຢຊູຫຼາຍແທ້ ນາງຈຶ່ງເອົານ້ຳມັນຫອມທີ່ມີລາຄາແພງຫຼາຍມາສົງພະບາດຂອງພະອົງ.

ກ. ໃນໂຢຮັນ 12:5 ນ້ຳມັນນັ້ນມີລາຄາຈັກເດນາລິອົນ? _________________________

ຂ. ຄ່າຈ້າງແຮງງານມື້ໜຶ່ງເປັນ 1 ເດນາລິອົນຄົນຍິວເຄີຍເຮັດການອາທິດລະ 6 ວັນ ຂາດວັນເສົາບໍ່ເຮັດ. ຖ້າຢ່າງນັ້ນ 300 ເດນາລິອົນເທົ່າກັບຄ່າຈ້າງຄົນໃນໄລຍະເວລາເທົ່າໃດ? (ເລືອກ)

______ ອາທິດໜຶ່ງ ______ ເດືອນໜຶ່ງ ______ ປີໜຶ່ງ

**7** ທີ່ພວກສາວົກຖືວ່າການຖອກນ້ຳມັນນັ້ນ ເປັນການເສຍຂອງລ້າໆ ແຕ່ພະເຢຊູຖືວ່າການຖອກນ້ຳມັນນັ້ນມີເຫດຜົນຢ່າງໃດ? (ເລືອກ)

ກ. ເປັນທີ່ນາງສະແດງຄວາມນັບຖືຕໍ່ພະອົງ.

ຂ. ການໂຕ້ຖຽງກັນລະຫວ່າງພະອົງກັບພວກສາວົກບໍ່ຄວນເປີດເຜີຍ.

ຄ. ເອົານ້ຳມັນຫອມແຈກໃຫ້ຄົນຍາກຈົນຈະດີກວ່າ.

*ມີບາງເທື່ອຄົນນອກເຄີຍຕິວ່າຄຼິດສະຕຽນຖະຫວາຍຊັບໂດຍບໍ່ມີປະໂຫຍດ. ອາດຈະວ່າຄຼິດສະຕຽນເຮັດວຽກເພື່ອພະເຈົ້າໂດຍບໍ່ມີສາເຫດແຕ່ທີ່ຈິງແມ່ນຄຼິດສະຕຽນເຮັດເພື່ອສະແດງຄວາມຮັກຕໍ່ພະເຈົ້າ.*

**8** ໃນ ມທ 26:12 ພະເຢຊູບອກສາເຫດທີ່ນາງມາລີອາຖອກນ້ຳມັນຫອມໃສ່ເພື່ອຫຍັງ?

__________________________________________________

*ແຕ່ນາງມາລີອາເອງອາດຈະບໍ່ເຂົ້າໃຈສາເຫດນັ້ນເທື່ອ!*

**9** ຕາມປະເພນີໃນປາແລັດສະຕິນໃນສະໄໝນັ້ນ ເຂົາເຄີຍສົງສົບຄົນຕາຍກ່ອນທີ່ຈະຝັງ (ລູກາ 23:55-24:1) ແຕ່ເມື່ອເຂົາຈະສົງສົບຂອງພະເຢຊູເປັນຢ່າງໃດ? (ລູກາ 24:3) __________

**10** ຫຼັງຈາກພະອົງຕາຍແລ້ວພວກຜູ້ຍິງນັ້ນບໍ່ໄດ້ຖອກນ້ຳມັນຫອມໃສ່ພະອົງອີກເພາະນາງ __________________ ໄດ້ຖອກໄວ້ ກ່ອນແລ້ວ. (ຕື່ມຄວາມທີ່ຂາດ)

**11** ໃນໂຢຮັນ 12:4-5 ເຫັນວ່າມີສາວົກຄົນໜຶ່ງທີ່ເປັນຫ່ວງກ່ຽວກັບນ້ຳມັນຫອມທີ່ເສຍໄປ.

ກ. ສາວົກນັ້ນຊື່ຫຍັງ? ____________________________________

ຂ. ເປັນຫຍັງເພິ່ນຈຶ່ງຫ່ວງ? (ໂຢຮັນ 12:6) __________________________

__________________________________________________

*ເຫັນວ່າທ່າທີຂອງຢູດາ ແລະມາລີອາແຕກຕ່າງກັນຫຼາຍ.*

**12** ກ.ຫຼັງຈາກວັນອັງຄານພະເຢຊູເມື່ອຍຫຼາຍມາເຖິງວັນພຸດ ພະອົງເຮັດຫຍັງ? ____________

ຂ.ຢູດາອິດສະກາລີອົດເຮັດຫຍັງໃນວັນພຸດນັ້ນ? (ມທ 26:14) ____________________

__________________________________________________

## ວັນພຸດ

**13** ເທດສະການປັດສະຄາໃກ້ຈະມາເຖິງແລ້ວກຸງເຢລູຊາເລັມກໍເຕັມໄປດ້ວຍຄົນທີ່ຈະສະຫຼອງເທດສະການນັ້ນ. ກອງທັບຂອງຈັກກະພັດໂລມໄດ້ຈັດຕັ້ງທະຫານໄວ້ໃຫ້ຮັກສາຄວາມປອດໄພໃນກຸງ.

ກ. ໃນ ມທ 26:4-5 ປະໂລຫິດໃຫຍ່ຢ້ານຫຍັງ? ____________________________

ຂ. ຫຼັງຈາກເທດສະການແລ້ວເຂົາປຶກສາກັນວ່າຈະຈັບພະເຢຊູເຮັດຫຍັງ? _____________

**14** ໃຫ້ອ່ານ ມທ 26:14-16 ພວກຜູ້ນຳໃນສາດສະໜາຢິວຄິດວ່າຈະບໍ່ຂ້າພະເຢຊູກ່ອນເທດສະການເທື່ອ ເພາະເຂົາ ຢ້ານຈະເກີດມີການວຸ້ນວາຍ, ຕໍ່ໄປກໍເຫັນຢູດາອິດສະກາລີອົດມາເປີດໂອກາດກ່ອນ. ໃນ ມທ 26:15 ຢູດາຖາມຫຍັງຈາກເຂົາ? ___________________________

______________________________________________________________________

**15** ໃນສອງຄົນນັ້ນ (ຢູດາແລະນາງມາລີອາ)

ກ. ຄົນໃດນັບຖືພະເຢຊູຢ່າງສູງ? ___________________________________________

ຂ. ຄົນໃດສະແດງແຕ່ຢາກໄດ້ປະໂຫຍດສ່ວນຕົວ? _____________________________

**16** ກ. ຢູດາຢາກໄດ້ຫຍັງ? _______________________________________________

ຂ. ມາລີອາສະແດງທ່າທີຢ່າງໃດ? _________________________________________

**17** ນາງມາລີອາສະແດງຄວາມນັບຖືຢ່າງໃດ? (ເລືອກ)

ກ. ໂດຍແຕ່ງອາຫານໄວ້.

ຂ. ໂດຍການມອບໃຫ້ພະອົງຢ່າງຊື່ນຊົມຍິນດີ. ຄ, ໂດຍຄວາມເສົ້າໃຈ.

**18** ພວກເຮົາຈະສະແດງຄວາມຮັກຕໍ່ພະເຢຊູແລະຕໍ່ພີ່ນ້ອງຄຼິດສະຕຽນຢ່າງໃດ? (ເລືອກ)

ກ. ໃນການເຮັດວຽກຫຼາຍເພື່ອຄຼິດສະຕະຈັກ.

ຂ. ໃນການຖະຫວາຍໂດຍໃຈຊື່ນຊົມຍິນດີ.

ຄ. ໃນການເຕືອນສະຕິເຂົາຢູ່ສະເໝີ.

**19** ນາງມາລີອາສະແດງຄວາມນັບຖືຕໍ່ພະອົງໂດຍໃຫ້ສິ່ງໜຶ່ງທີ່ມີລາຄາແພງຫຼາຍ. ໃນບົດຮຽນທີ່ຜ່ານມາເຮົາຮຽນຮູ້ແລ້ວວ່າເທື່ອໃດທີ່ເຮົາຈະລົງມືຊ່ວຍຄົນອື່ນເຮົາຄວນຈະຊ່ວຍໃຜກ່ອນ?

______________________________________________________________________

**20** ໃນລາຍຊື່ຂໍ້ພະຄຳພີຕໍ່ໄປນີ້ ໃຫ້ທ່ານໝາຍໄວ້ຂໍ້ໃດທີ່ເປັນຕົວຢ່າງໃນການສະແດງຄວາມຮັກ.

____ 2 ໂກລິນໂທ 8:2-4 ____ 2 ໂກລິນໂທ 8:9 ____ ຟີລິບປອຍ 4:16

**21** ຄຼິດສະຕຽນໃນສະໄໝພະຄຳພີໃໝ່ເຄີຍຖະຫວາຍຊັບໃຫ້ສອງຈຳພວກເປັນຕົ້ນ

ກ. ໃນ ຄາລາເຕຍ 6:6 ເຂົາແບ່ງໃຫ້ໃຜ? ____________________________________

ຂ. ໃນ ໂລມ 15:26 ເຂົາຝາກໃຫ້ໃຜ? ______________________________________

**22** ເຮົາສະແດງຄວາມຮັກຕໍ່ພະເຢຊູໂດຍການ ____________________ ໃຫ້ຄົນທີ່ທຸກຍາກ ແລະ ພວກຂ້າໃຊ້ຂອງພະເຈົ້າ. (ຕື່ມ)

**23** ໃນບົດຮຽນທີ່ຜ່ານມານັ້ນເຮົາຮຽນຮູ້ແລ້ວວ່າມີບາງເທື່ອທີ່ເຂົາຈະຂໍຈາກເຮົາແຕ່ບໍ່ເປັນການເໝາະສົມທີ່ຈະໃຫ້ເຂົາ. ເປັນຫຍັງບໍ່ຄວນ? ______________________________________

______________________________________________________________________

______________________________________________________________________

**24** ໃນບົດຮຽນກ່ອນໆ ນັ້ນເຮົາຮຽນຮູ້ແລ້ວວ່າຊັບສິ່ງຂອງທັງໝົດເປັນຂອງພະເຈົ້າ. ພະເຈົ້າຝາກໄວ້ໃຫ້ຜູ້ໃດເປັນຜູ້ດູແລ? ____________________________________________

*ມາເຖິງນີ້ ພວກເຮົາໄດ້ຮຽນເລື່ອງວິທີໃຊ້ຊັບສິ່ງຂອງສ່ວນຕົວຢ່າງຖືກຕ້ອງ. ຈາກນີ້ຕໍ່ໄປເຮົາຈະຮຽນວິທີໃຊ້ຊັບຂອງພະເຈົ້າໃນຄັງຂອງຄຣິດສະຕະຈັກ.*

## ການຄຸ້ມຄອງຄັງໃນຄຣິດສະຕະຈັກ

**25** ສ່ວນຫຼາຍເງິນໃນຄັງຂອງຄຣິດສະຕະຈັກເປັນເງິນທີ່ພີ່ນ້ອງຄຣິດສະຕຽນໄດ້ຖະຫວາຍມາໃຫ້ພະເຈົ້າ.

ກ. ຖ້າເຮົາເຊື່ອວ່າ ເງິນນີ້ເປັນເງິນຂອງພະເຈົ້າແລ້ວ ຮົາຄວນຈະຈັດການຢ່າງໃດ? (ເລືອກຫຼາຍຂໍ້ກໍໄດ້)

1.ຢ່າງເປັນລະບຽບ 2. ຢ່າງບໍ່ເອົາໃຈໃສ່ 3. ຢ່າງແນ່ນອນ

4.ຢ່າງໂລບມາກ 5. ຢ່າງຖືກຕ້ອງຄົບຖ້ວນ 6. ຢ່າງສັບສົນ.

ຂ. ເປັນຫຍັງຈຳເປັນຕ້ອງເຮັດບັນຊີຢ່າງຄົບຖ້ວນແລະລະອຽດ?

____________________________________________________________

**26** ກ. ຈຳເປັນຕ້ອງເຮັດບັນຊີຢ່າງລະອຽດແລະຄົບຖ້ວນເພາະເງິນທີ່ພີ່ນ້ອງຄຣິດສະຕຽນຖະຫວາຍນັ້ນ ກາຍເປັນຂອງໃຜ? ________________________________________

ຂ. ຖ້າເປັນເງິນຂອງພະເຈົ້າຜູ້ປົກຄອງໃນຄຣິດສະຕະຈັກສົມຄວນຈະຮັກສາໄວ້ຢ່າງເປັນ ________________ ແລະຄົບ _________________________ . (ຕື່ມຄວາມທີ່ຂາດ)

**27** ດັ່ງນັ້ນເທື່ອໃດທີ່ຄຣິດສະຕະຈັກຈະເລືອກນາຍເອົາຄັງຈຳເປັນຕ້ອງເລືອກເອົາຜູ້ທີ່ເໝາະສົມ. ຄວນເລືອກເອົາຄົນຢ່າງໃດ? (ເລືອກ)

ກ. ຜູ້ທີ່ມີປັນຍາແລະໄວ້ໃຈໄດ້

ຂ. ຄົນທີ່ເຂົ້າເປັນຄຣິດສະຕຽນໃໝ່ໆ

ຄ. ຄົນທີ່ເຕັມໃຈຮັບ

ງ. ຄົນໃຈກວ້າງເຖິງແມ່ນວ່າເພິ່ນບໍ່ຮູ້ການບັນຊີກໍຕາມ.

ຈ. ຄົນທີ່ຮູ້ການບັນຊີຢ່າງລະອຽດແລະຄົບຖ້ວນ.

**28** 1 ໂກລິນໂທ ບົດ 12 ບອກເຖິງເລື່ອງຂອງປະທານໃນຄຣິດສະຕະຈັກ. ໃນຂໍ້ 28 ເຫັນວ່າຜູ້ປົກຄອງກໍເປັນຂອງປະທານປະການໜຶ່ງທີ່ມາຈາກພະວິນຍານບໍລິສຸດ.

ກ. ນາຍຄັງຕ້ອງການຂອງປະທານໃດເປັນຕົ້ນ? ______________________________

ຂ. ໃນຂໍ້ 28 ນັ້ນແມ່ນໃຜຕັ້ງຄົນເຫຼົ່ານັ້ນໃນຄຣິດສະຕະຈັກ? ______________________

ຄ. ນາຍຄັງຄວນຈະເປັນຄົນທີ່ໄດ້ຮັບຂອງປະທານຈາກພະວິນຍານໃນການປົກ _________ ເພື່ອຈະຮູ້ເຮັດບັນຊີຢ່າງຄົບ ________ ແລະ ຢ່າງລະ ________ ດີ. (ຕື່ມຄວາມທີ່ຂາດ)

**29** ກ. ໃນໂຢຮັນ 12:46 ເຫັນວ່າແມ່ນສາວົກຄົນໃດທີ່ເປັນນາຍຄັງເຂົາ? ________________

ຂ. ຢູດາຂາດຄຸນນະພາບຢ່າງໃດ? (ເລືອກ ຂໍ້ດຽວ)

______ ຄວາມສະຫຼາດ ______ ຄວາມສັດຊື່ ______ ຄວາມເປັນລະບຽບ

**30** ບໍ່ສົມຄວນທີ່ຈະເອົາຢູດາອິດສະກາລີອົດເປັນຕົວຢ່າງໃນການເລືອກນາຍຄັງ ເພາະຜູ້ທີ່ຈະເປັນນາຍຄັງນັ້ນຄວນມີຂອງປະທານໃນການປົກ _____ ແຕ່ຍິ່ງກວ່ານັ້ນອີກ ຕ້ອງເປັນຄົນທີ່ຊື່ __

**31** ກ. ຜູ້ທີ່ຈະຮັບພາລະເປັນນາຍຄັງໃນຄຣິດສະຕະຈັກ ຄວນມີຂອງປະທານໃດ? ___________

ຂ. ແລະ ສົມຄວນຈະເປັນຄົນທີ່ມີປັນຍາ ແລະຊື່ ________________ ອີກ. (ຕື່ມຄວາມຂາດ)

**32** ຜູ້ທີ່ຮັບໜ້າທີ່ເປັນນາຍຄັງ ອາດຈະມີການທົດລອງໂດຍສະເພາະ. ໃນລາຍຊື່ການທົດລອງຕໍ່ໄປນີ້ ນາຍຄັງໃນຄຣິດສະຕະຈັກອາດຈະຖືກທົດລອງສາມຢ່າງໃດ? (ເລືອກ)

ກ. ທົດລອງກູ້ເງິນຈາກຄັງເພື່ອຊື້ຢາຮັກສາພີ່ນ້ອງທີ່ເຈັບ.

ຂ. ທົດລອງການໃຊ້ຈ່າຍທຸກປະການຢ່າງເໝາະສົມ.

ຄ. ທົດລອງເກັບໃບຮັບເງິນທຸກໃບເພື່ອໃຫ້ຜູ້ຊຳລະບັນຊີກວດ.

ງ. ທົດລອງທີ່ຈະໃຫ້ຄົນຂໍຢືມເງິນໂດຍບໍ່ຜ່ານຄະນະກຳມະການ.

ຈ. ທົດລອງທີ່ຈະໃຊ້ເງິນໃນການສ່ວນຕົວ.

ສ. ທົດລອງທີ່ຈະເກັບບັນຊີຢ່າງຄົບຖ້ວນ.

**33** ໃນ 2 ກລທ ບົດ 8 ອາຈານໂປໂລກ່າວເລື່ອງທີ່ຄຣິດສະຕະຈັກໃນເມືອງໂກລິນໂທ ສົ່ງເງິນຊ່ວຍພີ່ນ້ອງທີ່ທຸກ ຍາກ.

ກ. ໃນຂໍ້ 17 ແລະ 18 ເຫັນວ່າເຂົານັດຈັກຄົນໃຫ້ເອົາເງິນນັ້ນໄປໃຫ້? ________________

ຂ. ໃນຂໍ້ 20-21 ໂປໂລບອກວ່າເຂົາຈັດການຢ່າງນັ້ນເພື່ອບໍ່ໃຫ້ຜູ້ໃດເຮັດຫຍັງ? _________

ຄ. ເປົ້າໝາຍຢາກເປັນຄົນຢ່າງໃດ? ________________________________________

ງ. ສັດຊື່ຕໍ່ໜ້າພະເຈົ້າແລະຕໍ່ໜ້າຄົນໃດອີກ? __________________________________

*ຄືອາຈານໂປໂລຢາກໃຫ້ຮັກສາເງິນໄວ້ຢ່າງເປັນລະບຽບ.*

**34** ເລື່ອງການບັນຊີມີກົດເກນ 5 ປະການທີ່ສົມຄວນປະຕິບັດດັ່ງຕໍ່ໄປນີ້:

| | |
|---|---|
| ສອງຄົນ: | ຢ່າງນ້ອຍຄວນມີສອງຄົນ ເພື່ອຈະນັບຊັບທີ່ຖະຫວາຍ, ເກັບບັນຊີ, ຈ່າຍເງິນແລະເຊັນຊື່ໃສ່ ບິນສັ່ງຈ່າຍ. |
| ໃບຮັບເງິນ: | ຄວນມີປື້ມໃບຮັບເງິນ ເທື່ອໃດທີ່ມີການໃຊ້ຈ່າຍເງິນອອກ ຫຼືຮັບເງິນເຂົ້າຄັງ ຕ້ອງມີໃບ ຮັບມອບເປັນຫຼັກຖານສຳເນົາໄວ້. |
| ຕູ້ເກັບເງິນສົດ: | ຈົ່ງເອົາເງິນສົດໃສ່ໄວ້ໃນຕູ້ທີ່ໃສ່ກະແຈຢູ່ສະເໝີ. |
| ບັນຊີທະນະຄານ: | ຖ້າຢູ່ໃກ້ກັບເມືອງທີ່ມີທະນາຄານ ສົມຄວນມີບັນຊີເອົາເງິນໄວ້. |
| ການກວດກາບັນຊີ: | ຄວນມີຄົນທີ່ບໍ່ແມ່ນນາຍຄັງ ກວດບັນຊີຢ່າງນ້ອຍປີລະເທື່ອ. |

ທີ່ຈະຖືກົດລະບຽບເຫຼົ່ານີ້ ເປັນສິ່ງທີ່ສຳຄັນຫຼາຍເພາະເງິນນັ້ນບໍ່ແມ່ນເງິນຂອງນາຍຄັງ ບໍ່ແມ່ນເງິນຂອງເຖົ້າແກ່ ບໍ່ແມ່ນເງິນຂອງອາຈານ ເປັນເງິນຂອງໃຜ? ________________

*ດັ່ງນັ້ນ ເຮົາຈຶ່ງຮັກສາໄວ້ຢ່າງເປັນລະບຽບແລະຄົບຖ້ວນ.*

**35** ກົດເກນໃນການຮັກສາບັນຊີໃນຄຼິດສະຕະຈັກມີ 5 ປະການດັ່ງຕໍ່ໄປນີ້: (ຕື່ມຄວາມທີ່ຂາດ)

ສອງ ________________________

ໃບ ________________________

ຕູ້ເກັບ ______________________

ບັນຊີທະ ___________________

ການກວດກາ ________________

**36** ກົດເກນເຫຼົ່ານັ້ນສຳຄັນຫຼາຍໃນການຮັກສາສິ່ງຂອງໃນຄຼິດສະຕະຈັກ.

ກ. ເງິນນັ້ນເປັນຂອງໃຜ? ________________________________________________

ຂ. ເຮົາສົມຄວນຮັກສາຫຍັງໃຫ້ຖືກ ຈຶ່ງຈະຖະຫວາຍກຽດໃຫ້ພະເຈົ້າ? _______________

**37** ກ. ຄວນມີຢ່າງນ້ອຍສອງຄົນທີ່ຈະ ນັບຫຍັງ? __________________________________

ຄວນມີຢ່າງນ້ອຍສອງຄົນທີ່ຈະ ຮັກສາປຶ້ມຫຍັງ? ______________________________

ຄວນມີຢ່າງນ້ອຍສອງຄົນທີ່ຈະ ຈ່າຍຫຍັງ? ________________________________

ຄວນມີຢ່າງນ້ອຍສອງຄົນທີ່ຈະ ເຊັນຫຍັງ? ________________________________

ຂ. ໃບຮັບເງິນເປັນຫຼັກຖານທຸກເທື່ອທີ່ເຮົາຈະ ຈ່າຍຫຍັງ? ________________________

ໃບຮັບເງິນເປັນຫຼັກຖານທຸກເທື່ອທີ່ເຮົາຈະ ຮັບຫຍັງ? __________________________

ຄ. ໃຫ້ມີຕູ້ໃສ່ກະແຈເກັບຫຍັງໄວ້? __________________________________________

ງ. ຖ້າຢູ່ໃກ້ເມືອງ ຄວນເອົາເງິນເຂົ້າຫຍັງ? ____________________________________

ຈ.ແລະຄວນມີຫຍັງຢ່າງນ້ອຍປີລະເທື່ອ? ______________________________________

**38** ກ. ນອກຈາກນາຍຄັງຄວນມີຢ່າງນ້ອຍອີກຈັກຄົນນັບເງິນແລະຈົດໃສ່ໄວ້ໃນບັນຊີ? ______

ຂ. ເທື່ອໃດທີ່ຈະຈ່າຍເງິນສິດຄວນມີຫຼັກຖານຢ່າງໃດ? __________________________

ຄ. ຈະເອົາເງິນສິດຂອງຄຼິດສະຕະຈັກໄວ້ໃສ? __________________________________

ງ. ຖ້າຢູ່ໃກ້ເມືອງຄວນເອົາເງິນສ່ວນຫຼາຍໄປໄວ້ໃສ? __________________________

ຈ. ຈະໃຫ້ໃຜມາກວດບັນຊີປີລະເທື່ອ? ________________________________________

*ໃຫ້ທ່ານທ່ອງຂຶ້ນໃຈໃນກົດເກນ 5 ປະການໂດຍໃຊ້ຄຳຫຍໍ້ດັ່ງຕໍ່ໄປນີ້: ສອງຄົນ, ໃບຮັບເງິນ, ຕູ້ເງິນ ສິດ. ທະນາຄານ ແລະກວດກາບັນຊີ.*

**39** ໃຫ້ທ່ານຈົດກົດເກນຫຍໍ້ໄວ້ (ຕື່ມຄວາມທີ່ຂາດ)

_____ ຄົນ, _____ ຮັບ _____, ຕູ້ ___________, ບັນຊີ __________, ການກວດ ______

**40** ໃນ 2 ໂກລິນໂທ 8:21 ອາຈານໂປໂລບອກດັ່ງຕໍ່ໄປນີ້: "ດ້ວຍວ່າເຮົາມຸ້ງໝາຍຢາກເປັນຄົນສັດຊື່ ບໍ່ໃຊ່ແຕ່ ສະເພາະຕໍ່ພະພັກອົງພະຜູ້ເປັນເຈົ້າເທົ່ານັ້ນແຕ່ຕໍ່ໜ້າຄົນທັງປວງດ້ວຍ." ຖ້າຈະປະຕິບັດຕາມຂໍ້ພະຄຳພີເດີມນັ້ນນາຍຄັງໃນຄຼິດສະຕະຈັກຄວນສະເໜີລາຍຊື່ບັນຊີຢ່າງໃດ? (ເລືອກ)

ກ. ລາຍງານໃຫ້ຄຼິດສະຕຽນທຸກຄົນເພື່ອໃຫ້ທຸກຄົນຮູ້ເລື່ອງ.

ຂ. ລາຍງານແຕ່ສະເພາະຜູ້ນຳຜູ້ສຳຄັນເພື່ອຄົນທົ່ວໄປຈະບໍ່ກຸ້ມໃຈ.

ຄ. ບໍ່ຕ້ອງລາຍງານໃຫ້ໃຜຮູ້ເລີຍ.

**41** ກ. ແມ່ນຄົນໃດໃນທີ່ປະຊຸມຂອງທ່ານທີ່ຄວນຮັບລາຍງານຈາກນາຍຄັງກ່ຽວກັບລາຍຮັບແລະລາຍຈ່າຍ? ______________________________

ຂ. ຄວນຈົດລາຍຮັບແລະລາຍຈ່າຍທັນທີກ່ອນທີ່ຈະ ______________ . (ຕື່ມຄວາມຂາດ)

**42** ກ. ຖ້າເຮົາຈະຖະຫວາຍເງິນຫຼືຊັບສິ່ງຂອງໃຫ້ພະເຈົ້າຢ່າງນາງມາລີອາ ການນັ້ນສະແດງທ່າທີຢ່າງໃດຕໍ່ພະເຢຊູ? ______________________________

ຂ. ດັ່ງນັ້ນເປັນການເໝາະສົມທີ່ເຮົາຈະເຮັດຢ່າງໃດ? (ເລືອກ)

_____ ຖະຫວາຍຊັບ _____ ບໍ່ຖະຫວາຍຊັບ _____ ແລ້ວແຕ່ໃຈມັກ

**43** ໃຫ້ທ່ານຈົດກົດເກນຫຍໍ້ 5 ປະການກ່ຽວກັບການຄັງ ______________________________

______________________________ ______________________________

______________________________ ______________________________

**44** ຕໍ່ໄປນີ້ເຮົາຈະສະແດງລະບົບເກັບບັນຊີຢ່າງໜຶ່ງ: ນາຍຄັງຄວນມີປຶ້ມບັນຊີ ເພື່ອຈົດ "ລາຍຮັບ" ທຸກປະການ. ປຶ້ມບັນຊີນັ້ນມີຈຸດປະສົງຢ່າງໃດ? (ເລືອກ)

ກ. ຈົດຈຳນວນຄົນທີ່ມາປະຊຸມທຸກເທື່ອ.

ຂ. ສະເໜີຄວາມຕ້ອງການຂອງຄົນທຸກຍາກທີ່ເຄີຍຊ່ວຍ.

ຄ. ຈົດລາຍຮັບໄວ້ທຸກອາທິດ.

**45** ຖ້າມີບັນຊີໃນທະນາຄານ ອາດຈະບໍ່ຕ້ອງຈ່າຍເງິນຈາກຕູ້ເກັບເງິນສົດເລີຍ ແຕ່ຈະຈ່າຍເງິນໂດຍໃຊ້ໃບບິນສັ່ງຈ່າຍຈາກທະນາຄານ. ຖ້າຢ່າງນັ້ນຄວນທີ່ຈະມີປຶ້ມບັນຊີສອງເຫຼັ້ມຄື: ເຫຼັ້ມໜຶ່ງທີ່ບັນທຶກເງິນສົດ ແລະອີກເຫຼັ້ມ ໜຶ່ງທີ່ເປັນເງິນໃນທະນາຄານ. ຖ້າມີບັນຊີທະນາຄານຕ່າງຫາກທ່ານຈະຈົດສິ່ງໃດຕໍ່ໄປນີ້ໄວ້ໃນປຶ້ມບັນຊີນັ້ນ? (ເລືອກ)

ກ. ບັນທຶກວ່າຈຳນວນເງິນຈາກຊັບທີ່ຖະຫວາຍທຸກໆ ອາທິດ

ຂ. ບັນທຶກຈຳນວນຄົນທີ່ມາປະຊຸມທຸກໆ ອາທິດ

ຄ. ບັນທຶກຈຳນວນເງິນທີ່ຝາກໄວ້ໃນທະນາຄານ

**46** ບັນຫາແຕ່ຢູ່ບ້ານນອກບໍ່ມີທະນາຄານ ດັ່ງນັ້ນຈະຕ້ອງເສຍລາຍຈ່າຍຈາກຕູ້ເກັບເງິນໂດຍກົງ. ຕໍ່ໄປນີ້ມີຕົວຢ່າງໜ້າປຶ້ມບັນຊີ

| ວັນເດືອນປີ | ຊື່ລາຍການ | ລາຍຮັບ | ລາຍຈ່າຍ |
|---|---|---|---|
| 15-4-90 | ຊັບທີ່ຖວາຍຕອນເຊົ້າ | 1250 | |
| | ຊັບທີ່ຖວາຍຕອນແລງ | 437 | |
| 18-4-90 | ເຂົ້າບັນຊີທະນາຄານ | | 1687 |
| 22-4-90 | ຖວາຍພິເສດ | 560 | |
| 22-4-90 | ຊັບທີ່ຖວາຍຕອນເຊົ້າ | 752 | |
| 23-4-90 | ຊັບທີ່ຖວາຍຕອນແລງ | 611 | |
| 23-4-90 | | | 1924 |

ຖ້າວ່າປຶ້ມບັນຊີບໍ່ມີຂາຍຫາຊື້ກໍບໍ່ໄດ້ ທ່ານເອົາປຶ້ມຂຽນທຳມະດາເຮັດປຶ້ມບັນຊີກໍໄດ້. ໜ້າປົກບົດທີ 16 ນີ້ ມີຕົວຢ່າງຫຼາຍໃບຈາກປຶ້ມບັນຊີຂອງຄູິດສະຕະຈັກ. ໜ້າ 4 ນັ້ນມີຄຳຂຽນຢູ່ໜ້າ 5 ແລະ 6 ເປັນບ່ອນຫວ່າງ. ໃຫ້ທ່ານສັງເກດເບິ່ງລາຍການໃນໜ້າ 4 ທັງລາຍຮັບແລະລາຍຈ່າຍດ້ວຍ.

ກ. ເງິນຕົ້ນທຶນເຂົ້າແຖວ ລາຍຮັບ ຫຼື ລາຍຈ່າຍ? ______________________________

ຂ. ຊັບຖະຫວາຍເຂົ້າແຖວໃດ? ______________________________

ຄ. ເງິນຊື້ປຶ້ມເພງເຂົ້າແຖວໃດ? ______________________________

ງ. ຊື້ຂອງກິນໃຫ້ຄົນຍາກຈົນເຂົ້າແຖວໃດ? ______________________________

ຈ. ຂາຍເຂົ້າຖະຫວາຍເຂົ້າແຖວໃດ? ______________________________

ຖ້າປຶ້ມບັນຊີໃສ່ໄປຈົນບໍ່ມີບ່ອນຫວ່າງຕໍ່ໄປ ຈະຕ້ອງລວມແຖວລາຍຮັບໃນທັນທີມີຄຳຂຽນວ່າ "ລວມ" ຕໍ່ໄປ ລວມແຖວລາຍຈ່າຍເຊັ່ນດຽວກັນ. ໃຫ້ທ່ານກັບໄປເບິ່ງໜ້າປົກບົດທີ 16 ອີກ ໃຫ້ລວມຈຳນວນໃນແຖວລາຍຮັບຂຽນໃສ່ຖັນຂ້າງຄຳ "ລວມ" ເຊັ່ນ:

| | | |
|---|---|---|
| | | 4030 ກີບ |
| | | 1020 ກີບ |
| | | 3010 ກີບ |
| | | 700 ກີບ |
| | ລວມ | 8760 ກີບ |
| ແລ້ວລວມລາຍຈ່າຍ | ເຊັ່ນ: | 500 ກີບ |
| | | 200 ກີບ |
| | ລວມ | 700 ກີບ |

ໃຫ້ທ່ານຂຽນ ລວມລາຍຮັບ ແລະລາຍຈ່າຍ ໃນບ່ອນທີ່ຖືກຕ້ອງຢູ່ໜ້າປົກບົດນີ້.

**47** ກ. ປຶ້ມບັນຊີນັ້ນ ແຖວລາຍຮັບລວມຈັກກີບ? ________________________________

ຂ. ແຖວລາຍຈ່າຍລວມຈັກກີບ? ________________________________________

ຄ. ໃຫ້ທ່ານລົບລາຍຈ່າຍອອກຈາກລາຍຮັບ 8760

\- 700

ເຫຼືອເທົ່າໃດ? _________

ງ. ຈຳນວນທີ່ເຫຼືອນັ້ນເປັນຈຳນວນເງິນທຶນທີ່ມີຢູ່.

ໃນວັນທີ 27-2-90 ຄູີດສະຕະຈັກມີເງິນຢູ່ຈັກກີບ? ___________________________

**48** ຢູ່ໃນໜ້າປຶກບົດນີ້ ເຫັນວ່າຕົວຢ່າງບັນຊີໜ້າ 4 ບໍ່ມີບ່ອນຫວ່າງແລ້ວ ເຮົາຈຶ່ງຕ້ອງຍົກເງິນທີ່ເຫຼືອຈາກໜ້າ 4 ໄປໄວ້ບັນຊີໜ້າ 5 ໃນຖັນ “ຕົ້ນທຶນ” ທ່ານຈະຂຽນຈຳນວນເງິນເທົ່າໃດໃສ່ລຸ່ມແຖວ “ລາຍຮັບ” ຂ້າງຖັນ “ຕົ້ນທຶນ” ຂອງໜ້າທີ 5 ນັ້ນ? __________________________

| ໃຫ້ຂຽນໄວ້ສາ |
|---|

**49** ເງິນທີ່ມີຢູ່ ເຮົາຮູ້ໄດ້ດ້ວຍຄຳນວນຢ່າງໃດ? (ເລືອກ)

ກ. ລວມແຖວລາຍຮັບ ຂ. ລວມແຖວລາຍຈ່າຍ

ຄ. ລວມແຖວລາຍຮັບລົບລວມແຖວລາຍຈ່າຍອອກ.

**50** ຖ້າທ່ານຮູ້ວ່າຈຳນວນເງິນທີ່ເຫຼືອຢູ່ຈາກໜ້າກ່ອນມາເປັນຕົ້ນທຶນໜ້າໃໝ່. ຕົ້ນທຶນນັ້ນຈະຈົດໄວ້ໃຕ້ແຖວລາຍຮັບ ຫຼື ລາຍຈ່າຍ? ________________________________________

**51** ຖ້ານາຍຄັງເຫັນຈຳນວນເງິນທີ່ເຫຼືອຈາກໜ້າກ່ອນເພິ່ນຄວນທີ່ຈະນັບເງິນໃນຕູ້ເກັບເງິນເບິ່ງວ່າຖືກກັບບັນຊີຫຼືບໍ່ເງິນໃນຕູ້ເກັບເງິນສົດຄວນເຂົ້າກັບຈຳນວນທີ່ຂຽນໄວ້ໃສ? _____________

**52** ທຸກເທື່ອທີ່ຈະເລີ້ມຕົ້ນໜ້າໃໝ່ໃນປຶ້ມບັນຊີ ນາຍຄັງຄວນເຮັດ 3 ຢ່າງກ່ອນ:

ກ. ລວມຈຳນວນໃນແຖວລາຍຮັບ ແລະລວມຈຳນວນໃນແຖວລາຍຈ່າຍ. ຕໍ່ໄປລົບລວມລາຍຈ່າຍຈາກລວມລາຍຮັບຈຶ່ງຈະຮູ້ສ່ວນໃດ? ________________________________

ຂ. ຍົກຈຳນວນສ່ວນທີ່ເຫຼືອຈາກໜ້າກ່ອນມາໃສ່ໄວ້ໜ້າໃໝ່ຂ້າງຖັນທີ່ຈະຈົດຄຳວ່າ “ຕົ້ນທຶນ” ລຸ່ມແຖວໃດ? ________________________________________________

ຄ. ຈຶ່ງນັບເງິນໃນຕູ້ເກັບເງິນສົດເບິ່ງວ່າຈະຖືກກັບຈຳນວນທີ່ຂຽນໄວ້ບ່ອນໃດ? _________

________________________________________________________________

**53** ມີບາງຄູີດສະຕະຈັກທີ່ຈະໃຫ້ນາຍຄັງລາຍງານຕໍ່ທີ່ປະຊຸມເດືອນລະເທື່ອ. ນາຍຄັງນັ້ນຄວນລາຍງານທຶນຈາກຕົ້ນເດືອນລາຍຮັບ ລາຍຈ່າຍ ແລະສ່ວນທີ່ເຫຼືອ. ສ່ວນທີ່ເຫຼືອຄວນໃຫ້ຖືກກັບຫຍັງ? ________________________________________________________

**54** ນາຍຄັງລາຍງານຕໍ່ທີ່ປະຊຸມໂດຍປາກເປົ່າ ຫຼືໂດຍໃບລາຍງາຍກໍໄດ້. ເງິນທີ່ເຫຼືອໃນທ້າຍເດືອນນັ້ນຈະຕ້ອງຖືກກັບສ່ວນໃດໃນໃບລາຍງານ? ___________________________

**55** ກ. ເວລາໃດທີ່ຕ້ອງເລີ້ມໜ້າໃໝ່ໃນປຶ້ມບັນຊີ ນາຍຄັງຈະຂຽນສ່ວນເຫຼືອຈາກໜ້າກ່ອນມາໃສ່ແຖວໃດໃນໜ້າໃໝ່? ____________________________________________

ຂ. ເມື່ອເອົາສ່ວນທີ່ເຫຼືອຈາກໜ້າກ່ອນມາເຂົ້າເປັນຕົ້ນທຶນໜ້າໃໝ່ ເພິ່ນຄວນນັບຫຍັງ? ___

ຄ. ໃຫ້ເງິນສົດນັ້ນຖືກກັບຫຍັງ? ________________________________________

**56** ກ່ອນຈະຈົບລົງກັບບົດນີ້ ໃຫ້ເຮົາກັບໄປອ່ານເລື່ອງຢູດາອິດສະກາລີອົດອີກຈາກ ມທ 27:3-10

ກ. ໃນ ມທ 27:3 ເມື່ອຢູດາເຫັນວ່າພະອົງຕ້ອງຖືກໂທດເພິ່ນຮູ້ສຶກຕົວຢ່າງໃດ? _________

ຂ. ການກິນແໜງນັ້ນກໍໜັກຫຼາຍ. ໃນ ມທ 27:4-5 ຢູດາຍອມຮັບຜິດຕໍ່ໜ້າໃຜ? _________

ຄ. ເພິ່ນຮັບຜິດຕໍ່ໜ້າເຂົາ ແຕ່ບໍ່ເຫັນເພິ່ນຮັບຜິດຕໍ່ໜ້າພະເຈົ້າ. ເພິ່ນເອົາເງິນຖິ້ມໄວ້ພະວິຫານແລ້ວອອກໄປ ເຮັດຫຍັງ? ________________________________________



**57** ໃຫ້ອ່ານໂຢຮັນ 17:12 ຄຳວ່າ “ເວັ້ນໄວ້ແຕ່ຜູ້ຖືກຊົງໝາຍໄວ້ສຳລັບຄວາມຈິບຫາຍ” ອ້າງເຖິງຢູດາ. ເບິ່ງຄືວ່າຢູດາໄດ້ລອດບໍ່? ________________________________________

**58** ຢູດາເຮັດຜິດຕໍ່ພະເຈົ້າ ເຖິງວ່າເພິ່ນຮັບຜິດຕໍ່ພວກເຖົ້າແກ່ກໍຕາມແຕ່ເພິ່ນຂາດບໍ່ຮັບຜິດຕໍ່ໃຜ?

______________________________________________________________

**59** ຕາມໃນ ພສສ 51:4 ເຮົາຄວນຮັບຜິດຕໍ່ໃຜ? ______________________________

*ໃຫ້ເປີດເສັງບົດທີ 16.*

**ຄຳຕອບ:**

**1** *ກ. ວັນອັງຄານ ຂ. ວັນພຸດ ຄ. ຢູດາອິດສະກາລີອົດ*

**2** *ກ. 6 ຂ. 2 ຄ. ການລ້ຽງຢູ່ບ້ານເບດທາເນຍ*

**3** *ຂ ຖືກ*

**4** *ວັນເສົາ (6 ມື້ກ່ອນ)*

**5** *ກ. ມາລີອາ ຂ. ມາທາ ແລະ ລາຊະໂລ*

**6** *ກ. 300 ຂ. ປີໜຶ່ງ*

**7** *ກ ຖືກ*

**8** *ເພື່ອການປົງສົບພະອົງ*

**9** *ບໍ່ເຫັນພະສົບ*

**ຄໍາຕອບ (ຕໍ່):**

**10** *ມາລິອາ*

**11** *ກ. ຢູດາອິດສະກາລີອົດ*
*ຂ. ເພາະເພິ່ນເຄີຍລັກເອົາເງິນຈາກຖົງຂອງພວກສາວົກ. (ຄໍາຄ້າຍຄືກັນກໍ່ໄດ້)*

**12** *ກ. ພັກຜ່ອນ ຂ. ໄປຫາພວກປະໂລຫິດໃຫຍ່ ເພື່ອຈະທໍລະຍົດພະອົງ.*

**13** *ກ. ຢ້ານພົນລະເມືອງຈະເກີດວຸ້ນວາຍ ຂ. ຂ້າເສຍ*

**14** *ພວກທ່ານຈະຍອມໃຫ້ອັນໃດແກ່ຂ້ານ້ອຍ ສ່ວນຂ້ານ້ອຍຈະມອບເພິ່ນໃຫ້ແກ່ພວກທ່ານ.*

**15** *ກ. ມາລິອາ ຂ. ຢູດາ*

**16** *ກ. ເງິນ ຂ. ຄວາມນັບຖື*

**17** *ຂ ຖືກ*

**18** *ຂ ຖືກ*

**19** *ພະເຢຊູ*

**20** *ຖືກໝົດທັງສາມ*

**21** *ກ. ຜູ້ທີ່ສອນພະທໍາ ຂ. ຄົນທຸກຍາກ*

**22** *ຖະຫວາຍ*

**23** *(ໃຫ້ແລກປ່ຽນຄວາມຄິດເຫັນກັບໝູ່ໃນປະຊຸມ)*

**24** *ພວກເຮົາ*

**25** *ກ. 1 3 5 ຖືກ ຂ. (ໃຫ້ແລກປ່ຽນຄວາມຄິດເຫັນກັບໝູ່ໃນປະຊຸມ)*

**26** *ກ. ພະເຈົ້າ ຂ. ລະບຽບ... ຖ້ວນ*

**27** *ກ ຈ ຖືກ*

**28** *ກ. ຜູ້ປົກຄອງ ຂ. ພະເຈົ້າ ຄ. ຄອງ... ຖ້ວນ... ອຽດ*

**29** *ກ. ຢູດາອິດສະກາລີອົດ ຂ. ຄວາມສັດຊື່*

**30** *ຄອງ... ສັດ*

**31** *ກ. ຜູ້ປົກຄອງ ຂ. ຊື່ສັດ*

**32** *ກ ງ ຈ ຖືກ*

**33** *ກ. ສອງ ຂ. ຕົງຽນ ຄ. ສັດຊື່ ງ. ຄົນທັງປວງ*

**34** *ພະເຈົ້າ*

**35** *ຄົນ ຮັບເງິນ ເງິນສົດ ນາຄານ ບັນຊີ*

**36** *ກ. ພະເຈົ້າ ຂ. ບັນຊີ*

**37** *ກ. ເງິນ ບັນຊີ ເງິນ ຊື່ ຂ. ເງິນ ເງິນ ຄ. ເງິນສົດ ງ. ບັນຊີທະນາຄານ*
*ຈ. ການກວດກາບັນຊີ*

**38** *ກ. ອີກຄົນໜຶ່ງ (ລວມເປັນສອງ) ຂ. ໃບຮັບເງິນ ຄ. ຕູ້ເກັບເງິນ*
*ງ. ທະນາຄານ ຈ. ເອົາຄົນທີ່ບໍ່ແມ່ນນາຍຄັງ*

**ຄໍາຕອບ (ຕໍ່):**

**39** *ສອງ ໃບ... ເງິນ ເກັບເງິນສົດ ທະນາຄານ ກາບັນຊີ*

**40** *ກ ຖືກ*

**41** *ກ. ທຸກຄືນ ຂ. ລືມ*

**42** *ກ. ຄວາມນັບຖື ຂ. ຖະຫວາຍຊັບ*

**43** *ສອງຄົນ ໃບຮັບເງິນ ຕູ້ເກັບເງິນສົດ ບັນຊີໃນທະນາຄານ ການກວດກາບັນຊີ*

**44** *ຄ ຖືກ*

**45** *ຄ ຖືກ*

**46** *ກ. ລາຍຮັບ ຂ. ລາຍຮັບ ຄ. ລາຍຈ່າຍ ງ. ລາຍຈ່າຍ ຈ. ລາຍຮັບ*

**47** *ກ. 8760 ກີບ ຂ. 700 ກີບ ຄ. 8060 ກີບ ງ. 8060 ກີບ*

**48** *8060 ກີບ*

**49** *ຄ ຖືກ*

**50** *ລາຍຮັບ*

**51** *ສ່ວນທີ່ເຫຼືອ*

**52** *ກ. ສ່ວນທີ່ເຫຼືອ ຂ. ລາຍຮັບ ຄ. ຂ້າງ "ຕົນທຶນ" ລຸ່ມແຖວລາຍຮັບໃນໜ້າໃໝ່*

**53** *ເງິນສົດໃນຕູ້ (ຫຼືໃນຕູ້ແລະໃນທະນາຄານ)*

**54** *ສ່ວນທີ່ເຫຼືອ*

**55** *ກ. ລຸ່ມແຖວລາຍຮັບ ຂ. ເງິນສົດ*
*ຄ. ເງິນທີ່ເຫຼືອຈາກໜ້າກ່ອນ (ຕົນທຶນຈາກໜ້າໃໝ່)*

**56** *ກ. ກິນແໜງ ຂ. ພວກເຖົ້າແກ່ ຄ. ຜູກຄໍຕາຍ*

**57** *ບໍ່ໄດ້ລອດ*

**58** *ພະເຈົ້າ*

**59** *ພະເຈົ້າ*